**ຜ-ຟຟລ ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນຄຸ້ມຄອງບໍລິຫານ ດີເດັ່ນ ປະຈຳປີ 2024 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ"**

ໃນວັນທີ 20 ທັນວາ 2024, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນຄຸ້ມຄອງບໍລິຫານດີເດັ່ນປະຈຳປີ 2024 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ຫຼື ຕລຊລ **(LSX Disclosure and Corporate Governance Award 2024)".**

ພິທີມອບຮັບລາງວັນໃນປີນີ້ ແມ່ນເພື່ອເປັນການສະຫຼຸບຕີລາຄາຍ້ອງຍໍຜົນງານການເປີດເຜີຍຂໍ້ມູນ ແລະ ການຄຸ້ມຄອງບໍລິຫານດີເດັ່ນ ຂອງບໍລິສັດຈົດທະບຽນໃນ ຕລຊລ ຕະຫຼອດໄລຍະປີ 2024 ທີ່ຕ້ອງໄດ້ປະຕິບັດວຽກງານການເປີດເຜີຍຂໍ້ມູນໃຫ້ແກ່ບັນດາຜູ້ລົງທຶນ ແລະ ມວນຊົນຮັບຊາບເປັນປະຈຳ. ການມອບຮັບລາງວັນດັ່ງກ່າວ. ຍັງເປັນການກະຕຸກຊຸກຍູ້ໃຫ້ບັນດາບໍລິສັດຈົດທະບຽນໄດ້ປະຕິບັດການລາຍງານ ແລະ ເປີດເຜີຍຂໍ້ມູນໃຫ້ສືບຕໍ່ເປັນປົກກະຕິຕໍ່ເນື່ອງ ເພື່ອສ້າງຄວາມເຊື່ອໝັ້ນແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນປີ 2024 ຜ-ຟຟລ ແມ່ນໄດ້ລາງວັນຄື: **"ການເປີດເຜີຍຂໍ້ມູນດີເດັ່ນປະເພດ1", "ລາງວັນເປີດເຜີຍຂໍ້ມູນສະໝັກໃຈດີເດັ່ນ 2024" ແລະ "ການຄຸ້ມຄອງບໍລິຫານດີເດັ່ນປະເພດ 2"**. ເຊິ່ງ ທ່ານ ນາງ ດາລີນາ ຊີງວີໄລ ຮອງຜູ້ອຳນວຍການຝ່າຍບໍລິຫານງານສະໜັບສະໜູນອົງກອນ ໄດ້ເປັນຜູ້ຕາງໜ້າ ບໍລິສັດ ຜ-ຟຟລ ເປັນຜູ້ຮັບລາງວັນດັ່ງກ່າວ.






